# ບົດຂ່າວຜົນສຳເລັດ
# ການຈັດກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ປະຈຳປີ 2025




## ໃນຕອນບ່າຍ ວັນສຸກ ວັນທີ 05 ກັນຍາ 2025

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ປະຈຳປີ 2025 ໃນເວລາ 14:30 ໂມງ ທີ່ ໂຮງແຮມ ລາວພລາຊ່າ ນະຄອນຫຼວງວຽງຈັນ.




ໂດຍການໃຫ້ກຽດເຂົ້າຮ່ວມເປັນປະທານກອງປະຊຸມ ຂອງ **ທ່ານ ສຸລິວັດ ສຸວັນນະຈູມຄຳ ຮອງລັດຖະມົນຕີກະຊວງການເງິນ - ປະທານສະພາບໍລິຫານ ທຄຕລ**, ມີບັນດາສະມາຊິກສະພາບໍລິຫານ, ຄະນະອຳນວຍການ, ຄະນະພະແນກ-ສູນຂອງ ທຄຕລ, ພ້ອມດ້ວຍຕາງໜ້າຈາກ ກົມຄຸ້ມຄອງທະນາຄານທຸລະກິດ, ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ ເຂົ້າຮ່ວມຕິດຕາມກອງປະຊຸມ.

ໃນກອງປະຊຸມດັ່ງກ່າວ ມີຜູ້ຖືຮຸ້ນ ທຄຕລ ເຂົ້າຮ່ວມດ້ວຍຕົນເອງຈຳນວນ 30 ທ່ານ, ຜູ້ມອບສິດ ຈຳນວນ 120 ທ່ານ ເຊິ່ງລວມຈຳນວນຮຸ້ນທັງໝົດ ໃນກອງປະຊຸມ ເທົ່າກັບ 779,784,250 ຮຸ້ນ, ລວມທັງ 3,690,685 ຮຸ້ນ ທີ່ຖືກມອບສິດ ໂດຍບັນລຸອັດຕາສ່ວນ 75,079 % ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.




ກອງປະຊຸມໄດ້ດຳເນີນແຕ່ລະວາລະຢ່າງຄົບຖ້ວນ ພ້ອມທັງໄດ້ເປີດໂອກາດໃຫ້ແກ່ຜູ້ຖືຮຸ້ນໄດ້ສອບຖາມບັນດາຂໍ້ສົນໃຈຕ່າງໆ ແລະ ຄະນະບໍລິຫານ ທຄຕລ ກໍ່ໄດ້ອະທິບາຍຊີ້ແຈງ ໃນແຕ່ລະບັນຫາຢ່າງກົງໄປກົງມາ ເຊິ່ງກອງປະຊຸມໄດ້ພິຈາລະນາຮັບຮອງບັນຫາສຳຄັນດັ່ງນີ້:




1) ຮັບຮອງເອົາບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝສາມັນ ປະຈຳປີ 2024 ທີ່ໄດ້ຈັດຂຶ້ນ ໃນວັນທີ 30 ເມສາ 2025.
2) ຮັບຮອງການດັດແກ້ແຜນການດຳເນີນທຸລະກິດຂອງ ທຄຕລ ປະຈຳປີ 2025.
3) ຮັບຮອງການແຕ່ງຕັ້ງ **ທ່ານ ນ. ບຸນຕາ ດາຣາວີ ເປັນຮອງປະທານສະພາບໍລິຫານ ທຄຕລ ຜູ້ໃໝ່** ເພື່ອປ່ຽນແທນ **ທ່ານ ປອ. ອາຄົມ ປຣະເສີດ** ທີ່ໄດ້ສິ້ນສຸດອາຍຸການ
4) ຮັບຮອງການແຕ່ງຕັ້ງ **ທ່ານ Michael De Clercq ຜູ້ອຳນວຍການ ທະນາຄານ ລາວ-ຝຣັ່ງ ຈຳກັດ** (ຕົວແທນຈາກ COFIBRED) **ເປັນສະມາຊິກສະພາບໍລິຫານ ທຄຕລ ຜູ້ໃໝ່** ເພື່ອປ່ຽນແທນ **ທ່ານ Arnaud Delaunay.**

ໃນກອງປະຊຸມຄັ້ງນີ້ **ທ່ານ ນ. ສາຍສະໝອນ ຈັນທະຈັກ ຜູ້ອຳນວຍການ ທຄຕລ** ໄດ້ໃຫ້ຄວາມເຊື່ອໝັ້ນແກ່ ຜູ້ຖືຮຸ້ນ ທຄຕລ ໂດຍທາງຄະນະບໍລິຫານງານ ທຄຕລ ຈະສືບຕໍ່ສູ້ຊົນ ໃນການຈັດຕັ້ງ-ປະຕິບັດແຜນທຸລະກິດ ປະຈຳປີ 2025 ໃຫ້ສາມາດບັນລຸເປົ້າໝາຍ ແລະ ສ້າງຜົນກຳໄລສູງສຸດ ເພື່ອຮັກສາຜົນປະໂຫຍດຂອງອົງກອນ ແລະ ຂອງຜູ້ຖືຮຸ້ນ ແລະ ກອງປະຊຸມ ກໍ່ໄດ້ດຳເນີນໄປໂດຍມີຜົນສຳເລັດຢ່າງຈົບງາມ.

